ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສາມອົງການຈັດຕັ້ງມະຫາຊົນ ອວຍພອນຄະນະຜູ້ວ່າການ ທຫລ





ໃນຕອນບ່າຍຂອງວັນທີ 1 ກຸມພາ 2021 ທີ່ ຫ້ອງຮັບແຂກຂອງ ທຫລ. ສະຫາຍ ນາງ ຂັນແກ້ວ ຫຼ້າມະນີເງິາ, ກຳມະການປະຈຳພັກ ທະນາຄານແຫ່ງ ສປປ ລາວ (ທຫລ), ປະທານສະຫະພັນກຳມະບານ ທຫລ, ພ້ອມດ້ວຍຄະນະ ຕາງໜ້າໃຫ້ສາມອົງການຈັດຕັ້ງມະຫາຊົນຂອງ ທຫລ ໄດ້ນຳພາຄະນະອວຍພອນສະຫາຍ ສອນໄຊ ສິດພະໄຊ, ກຳມະການສູນກາງພັກ, ເລຂາຄະນະພັກ ທຫລ, ຜູ້ວ່າການ ທຫລ ເນື່ອງໃນໂອກາດວັນສ້າງຕັ້ງສະຫະພັນກຳມະບານລາວ ຄົບຮອບ 65 ປີ (1 ກຸມພາ 1956 - 1 ກຸມພາ 2021) ແລະ ເພື່ອເປັນການສະແດງຄວາມຮູ້ບຸນຄຸນຕໍ່ການຊີ້ນຳ-ນຳພາຂອງອົງຄະນະພັກ ທຫລ ຕໍ່ການເຄື່ອນໄຫວວຽກງານຂອງສະຫະພັນກຳມະບານ ທຫລ ກໍ່ຄືສາມອົງການຈັດຕັ້ງມະຫາຊົນ ທຫລ.

ເນື່ອງໃນໂອກາດອັນສະຫງ່າລາສີນີ້, ສະຫາຍກຳມະການສູນກາງພັກ, ເລຂາຄະນະພັກ ທຫລ, ຜູ້ວ່າການ ທຫລ ໄດ້ໃຫ້ກຽດໂອ້ລົມ ແລະ ໃຫ້ທິດຊີ້ນຳຕໍ່ການເຄື່ອນໄຫວວຽກງານຂອງສະຫະພັນກຳມະບານ ທຫລ ກໍ່ຄືສາມອົງການຈັດຕັ້ງມະຫາຊົນ ໃຫ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການຂະຫຍາຍຮາກຖານຂອງສາມອົງການຈັດຕັ້ງມະຫາຊົນໃຫ້ເຂົ້າສູ່ລວງເລິກ ແລະ ເຜີຍແຜ່ວຽກງານດັ່ງກ່າວໃຫ້ແກ່ພາກສ່ວນທະນາຄານທຸລະກິດໄດ້ຮັບຮູ້ເຖິງພາລະບົດບາດ ແລະ ຄວາມສຳຄັນຂອງວຽກງານອົງການຈັດຕັ້ງມະຫາຊົນ ເພື່ອເຮັດໃຫ້ສາມອົງການຈັດຕັ້ງມະຫາຊົນມີຄວາມເຂັ້ມແຂງຍິ່ງໆຂຶ້ນໄປ.

**# ຂ່າວ-ພາບ: ວັນປະເສີດ ສີມບູນຂັນ.**